**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------

ກະຊວງຖະແຫລງຂ່າວ ແລະ ວັດທະນາທຳ ເລກທີ 664 /ຖວ

ວຽງຈັນ, ວັນທີ 22 ເດືອນ 10 ປີ 2003

# ຂໍ້ກຳນົດ

## ຂອງ ລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ວ່າດ້ວຍການຄຸ້ມຄອງ ແລະ ກວດກາ, ອະນຸຍາດ ຫລີ້ນເກມທຸກປະເພດຢູ່ ສ.ປ.ປ.ລາວ

- *ອີງໃສ່ ລັດຖະທຳມະນູນ ແລະ ກົດໝາຍ ແຫ່ງ ສ.ປ.ປ.ລາວ*
- *ອີງໃສ່ ດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍທີ່ຕັ້ງ, ພາລະບົດບາດ ແລະ ການເຄື່ອນໄຫວ ວຽກງານ ຂອງ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ສະບັບເລກທີ 25/ນຍ,ລົງວັນທີ 24 / 03 / 1999*

## ລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຕົກລົງອອກຂໍ້ກຳນົດ

## ໝວດທີ I ບົດບັນຍັດທົ່ວໄປ

### ມາດຕາ 1 : ຈຸດປະສົງ

1.1. ເພື່ອໃຫ້ ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງ ວຽງຈັນ ແລະ ເຂດພິເສດ ໃນທົ່ວປະເທດ ມີບ່ອນອີງໃນການວາງກົດລະບຽບລະອຽດ

ຂອງຕົນ ເພື່ອຄຸ້ມຄອງກວດກາ, ອະນຸຍາດໃຫ້ເຄື່ອນໄຫວຫລິ້ນເກມ ຢູ່ສະໂມສອນ ແລະ ຫ້ອງບໍລິການຫລິ້ນເກມ, ຮັບປະກັນຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດທົ່ວປະເທດ;

1.2. ເພື່ອຄຸ້ມຄອງກວດກາ, ອະນຸຍາດ ການນຳເຂົ້າເກມທຸກປະເພດ, ສິ້ນສ່ວນອາໄຫລ່ເຄື່ອງປະກອບສ້າງຕູ້ເກມ, ໂປຣແກມເກມ, ກະແຊັດເກມ ແລະ ຊີດີເກມ;

1.3. ເພື່ອຈຳກັດການເຄື່ອນໄຫວຫລິ້ນເກມແບບຊະຊາຍ, ຈຳກັດການນຳເຂົ້າ ແລະ ການນຳໃຊ້ ໂປຣແກມເກມ, ກະແຊັດ ແລະ ຊີດີເກມ ທີ່ມີລັກສະນະກະຕຸ້ນຄວາມແຮງ, ເບື່ອເມົາ, ການພະນັນ, ລາມົກອານາຈານ, ຄວາມຮູ້ສຶກຢ້ານກົວສະຫຍອງຂວັນ ແລະ ໂປຣແກມອື່ນໆ ທີ່ໄຮ້ສາລະ;

1.4. ເພື່ອປະກອບສ່ວນໃນການສຶກສານອກລະບົບ, ເຝິກສະຫມອງ ລອງປັນຍາ, ສ້າງປັນຍາ, ສ້າງໄຫວພິບ ປະຕິພານ ແລະ ການຕັດສິນໃຈ ກະທຳໃນສິ່ງທີ່ຖືກຕ້ອງ, ໃຫ້ແກ່ຊົນພະຍາ ກອນມະນຸດຢ່າງມີການເລືອກເຟັ້ນ, ເປັນລະບົບໃນປະສາດສຳຜັດເທັກ ໂນໂລຢີທີ່ດີ, ມີຄຸນປະໂຫຍດແກ່ລູກຫລານເຍົາວະຊົນລາວ, ທ່າມກາງກະແສຄື້ນ ເທັກໂນໂລຢີໃນໄລຍະໃຫມ່;

1.5. ເພື່ອກຳນົດລະບຽບຫລັກການ, ການປະສານງານ ແລະ ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ກັບທ້ອງຖິ່ນ ໃຫ້ມີລັກສະນະວິທະຍາສາດ ແລະ ຊັດເຈນ ເພື່ອຄວາມເປັນເອກະພາບ ໃນການຄຸ້ມຄອງຕາມຫລັກການສາຍຕັ້ງຂອງຂະແຫນງການ.

## ມາດຕາ 2 : ນິຍາມສັບສະເພາະໃຊ້ໃນຂໍ້ກຳນົດສະບັບນີ້:

2.1 ເຄື່ອງຫລິ້ນເກມ ຫລື ຕູ້ເກມ, ຫມາຍເຖິງເຄື່ອງຫລິ້ນເກມທຸກປະເພດ, ທີ່ໃຊ້ໄຟຟ້າຜ່ານຫນ້າຈໍແກ້ວ ເຊັ່ນ: ເກມອິນເຕີເນັດ, ເກມຢອດຫລຽນ, ເກມກົດ, ເກມຊີດີເປັນຕົ້ນ;

2.2 ເກມອິນເຕີເນັດ ແມ່ນເກມທີ່ຫລິ້ນຕາມໂປຣແກມທີ່ກຳນົດໄວ້ໃນເຄື່ອງກົນຈັກ;

2.3 ເກມກົດ ແມ່ນເກມທີ່ໃຊ້ມືບິບ ຫລື ກົດລົງປຸ່ມບັນຊາເຄື່ອງຫລິ້ນເກມ ໂດຍມີກະແຊັດເປັນ ໂປຣແກມຫລິ້ນ;

2.4 ເກມຊີດີ ແມ່ນເກມໃຊ້ແຜ່ນຊີດີ ມີກ້ອນເຊັບ ຫລື ບໍ່ມີກ້ອນເຊັບ, ແຕ່ໃຊ້ມືບິບ ຫລື ກົດລົງປຸ່ມບັນຊາເຄື່ອງຫລິ້ນເກມນັ້ນໆ;

2.5 ເກມຢອດຫລຽນ : ແມ່ນເກມຫລິ້ນການພະນັນທີ່ເອົາເງິນໄປຊື້ ຫລື ແລກເອົາຫລຽນ ( ຊິບຫລິ້ນເກມ ) ໄປບ່ອນໃສ່ໃນຕູ້ເກມ ຫລື ເອົາໄປລົງໃນຕາຂ່າຍເກມມ້າຫມູນ, ປີຫມູນ, ໂຕະຫມູນ, ເອີ້ນວ່າເກມ ( ສະຫລອດມາຊິບ ) ເປັນເກມຫລິ້ນການພະນັນ ຫລື ເອີ້ນວ່າ: ເກມກາຊີໂນ;

2.5.1 ເກມຝຶກສະຫມອງລອງປັນຍາ, ຫາຄວາມຮູ້ປະສົບການ, ສ້າງໄຫວພິບປະຕິພານ, ສ້າງຄວາມຮອບຄອບ ໃຫ້ແກ່ການຕັດສິນໃຈກະທຳໃນສິ່ງທີ່ຖືກຕ້ອງ ເຊັ່ນ : ເກມຫລິ້ນມີພາບເຄື່ອນໄຫວເຫນັງຜ່ານຫນ້າຈໍແກ້ວ, ເປັນຮູບຕຸກກະຕາ, ຮຸ່ນຍົນ, ຄົນ, ສັດ, ລົດ, ຍົນ, ເຮືອ, ດາວທຽມ, ທຳມະຊາດ, ເລກ, ການກໍ່ສ້າງ, ແຕ້ມຮູບພາບລະບາຍສີ ແລະ ອື່ນໆ ໂດຍໃຊ້ຄົນບັນຊາ ເອີ້ນວ່າ: ເກມສຶກສາຫາຄວາມຮູ້ ແລະ ເພື່ອຄວາມເພີດເພີນ.

ໃນນັ້ນ, ມີເກມຍອດຫລຽນບາງປະເພດກໍແມ່ນເກມຮັບໃຊ້ການສຶກສາເຊັ່ນການ ( ຖ້າວ່າມີການພະນັ້ນ ໂດຍກົງ ).

## ຫມວດທີ II
## ວ່າດ້ວຍ ສິດ ແລະ ຫນ້າທີ່

### ມາດຕາ 3 : ສິດອະນຸມັດ ແລະ ຄຸ້ມຄອງກວດກາ:

3.1 ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ມີສິດອະນຸມັດນຳເຂົ້າເກມອິນເຈຕີເນັດ, ເກມກົດ, ເກມຍອດຫລຽນ ແລະ ມີສິດອະນຸຍາດ - ຄຸ້ມຄອງໃຫ້ເປີດສະໂມສອນຫລິ້ນເກມດັ່ງກ່າວ ຕາມການລົງທຶນຂະໜາດໃຫຍ່ ຂອງ ພາຍໃນ ແລະ ຕ່າງປະເທດ ແລະ ການລົງທຶນໂດຍກົງ ( 100% ) ຂອງ ຕ່າງປະເທດ ໂດຍຜ່ານການຄົ້ນຄວ້າ ພິຈາລະນາ ແລະ ຕົກລົງ ເຫັນດີ ຂອງລັດຖະບານ;

3.2 ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ, ເຂດພິເສດ ມີສິດອະນຸມັດນຳເຂົ້າເກມຊີດີ, ເກມຝຶກສະຫມອງລອງປັນຍາ ແລະ ມີສິດຄຸ້ມຄອງ - ອະນຸຍາດ ໃຫ້ເປີດສະໂມສອນຫລິ້ນເກມດັ່ງກ່າວ ໃນຂອບເຂດຮັບຜິດຊອບ ຂອງຕົນ ຂອງຄົນພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າມາລົງທຶນຂະຫນາດກາງ ແລະ ຂະຫນາດນ້ອຍ;

3.3 ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳປະຈຳເມືອງ ມີສິດ ແລະ ຫນ້າທີ່ຄຸ້ມຄອງກວດກາ ຕິດຕາມການເຄື່ອນໄຫວບັນດາສະໂມສອນ, ຫ້ອງບໍລິການຫລິ້ນເກມ ໃຫ້ຖືກຕ້ອງ ຕາມຂໍ້ກຳນົດ ກົດລະບຽບ ໃນຂອບເຂດເມືອງຂອງຕົນ;

3.4 ການຫລິ້ນເກມທຸກປະເພດ ຕ້ອງຕັ້ງສະໂມສອນ, ຫ້ອງການຫລິ້ນເກມ ຕ້ອງມີສະຖານທີ່ກວ້າງຂວາງ, ສະອາດ, ອາກາດປອດໂປ່ງ, ມີແສງສະຫວ່າງ, ລະບົບແສງສີເຫມາະສົມ ບໍ່ ເຫລື້ອມຕາໂພດ, ລະບົບສຽງ ບໍ່ໃຫ້ດັງແຮງເກີນໄປ, ບໍ່ໃຫ້ກະທົບຕໍ່ຜູ້ອື່ນ ແລະ ບໍ່ໃຫ້ສຽງດັງອອກນອກຫ້ອງຫລິ້ນເກມ;

3.5 ຫ້ອງຫລິ້ນເກມ ຢູ່ຕາມສະໂມສອນແຕ່ລະຈຸດ ຕ້ອງມີລະບົບການຈັດຕັ້ງຮັບຜິດຊອບ, ມີກົດລະບຽບ, ມີລະບົບບັນຊີ, ມີປະຕັງການຄ້າ, ມີໃບອະນຸຍາດ ແລະ ຕ້ອງເຮັດພັນທະຕໍ່ພາສີ - ອາກອນ ໃຫ້ລັດ ຢ່າງຄົບຖ້ວນ;

3.6 ບັນດາສະໂມສອນ, ຫ້ອງບໍລິການຫລິ້ນເກມທຸກປະເພດ ( ກາຊິໂນ ) ຕ້ອງຮັບປະກັນຄວາມສະຫງົບ ປອດໄພຕໍ່ສຸຂະພາບ-ຊີວິດ ແລະ ຊັບສິນສົມບັດຕ່າງໆ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຈົບງາມ.

## ໝວດທີ III
## ວ່າດ້ວຍມາດຕະການ ແລະ ຂໍ້ຫ້າມ.

### ມາດຕາ 4 : ຂໍ້ຫ້າມ

4.1 ຫ້າມພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ອະນຸມັດນຳເຂົ້າເກມປະເພດອິນເຕີເນັດ, ເກມກົດ, ເກມຢອດຫລຽນ.

- ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳປະຈຳເມືອງ ແລະ ອຳນາດການປົກຄອງ ຂັ້ນບ້ານ, ຫ້າມອະນຸຍາດນຳເຂົ້າເກມທຸກປະເພດໂດຍເດັດຂາດ ມີແຕ່ໜ້າທີ່ຄຸ້ມຄອງ
- ກວດກາໃຫ້ຖືກຕ້ອງຕາມຂໍ້ກຳນົດຂອງກະຊວງ ແລະ ຕາມລະບຽບຫລັກການຂອງທ້ອງຖິ່ນ;

4.2 ຫ້າມອົງການ, ການຄ້າ, ບໍລິສັດທັງພາກລັດ ແລະ ເອກະຊົນ, ນິຕິບຸກຄົນ ແລະ ພາກສ່ວນທຸລະກິດຂາອອກ - ຂາເຂົ້າອື່ນໆ ນຳເຂົ້າຕູ້ເກມ, ເຄື່ອງຫລິ້ນເກມ, ຊິ້ນສ່ວນ ແລະ ອາໄຫລ່, ເຄື່ອງປະກອບຫລິ້ນເກມທຸກປະເພດ ໂດຍເດັດຂາດ ຖ້າບໍ່ໄດ້ຮັບອະນຸຍາດຈາກອົງການ ຄຸ້ມຄອງມະຫາພາກ ຂອງ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ;

4.3 ຫ້າມທຸກພາກສ່ວນ ທັງອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນຕິດຕັ້ງ, ປຸກສ້າງ ສະໂມສອນ ແລະ ຫ້ອງບໍລິການຫລິ້ນເກມທຸກປະເພດຢູ່ໃກ້ກັບໂຮງຮຽນ, ໂຮງໝໍ, ສຳນັກງານອົງການຂອງພັກ ແລະ ລັດ, ສຳນັກງານກົມກອງທະຫານ, ຕຳຫລວດ, ໄປສະນີ, ໂທລະຄົມ, ສູນຄົ້ນຄວ້າວິທະຍາສາດ, ສະຖານີດາວທຽມ, ວິທະຍຸ - ໂທລະພາບ ແລະ ວັດວາອາຮາມ ຢ່າງເດັດຂາດ;

4.4 ຫ້າມເປີດບໍລິການຫລິ້ນເກມຊີດີ, ເກມກົດ, ເກມອິນເຕີເນັດ, ເກມຄອມພິວເຕີ, ເກມຢອດຫລຽນຢູ່ຕາມຄອບຄົວ, ຕາມບ້ານ, ເຮືອນ, ຮ້ານຂາຍເຄື່ອງດື່ມ ຂະໜາດນ້ອຍ ເພື່ອເກັບເງິນແບບຊະຊາຍໂດຍເດັດຂາດ, ນອກຈາກສະໂມສອນ, ຫ້ອງບໍລິການຫລິ້ນເກມ, ຫ້ອງກາ ຊີໂນ ທີ່ໄດ້ຮັບອະນຸຍາດຖືກຕ້ອງ ຕາມ ມາດຕາ 3, ໝວດທີ II ຂອງ ຂໍ້ກຳນົດສະບັບນີ້;

4.5 ຫ້າມຫ້າມສະໂມສອນ, ຫ້ອງບໍລິການຫລິ້ນເກມທຸກປະເພດ ນຳໃຊ້ໂປຣແກມ, ລາຍການແບບພະນັນ, ລາມົກອານາຈານ, ລາຍການໜ້າຢ້ານກົວ, ສະຫຍອງຂວັນ - ອັນຕະພານ, ກະຕຸ້ນຄວາມຮຸ້ນແຮງ ແບບນຳຜົນສະທ້ອນທາງລົບ ຕໍ່ຈິດປະສາດ ຂອງຕົນ;

4.6 ຫ້າມບຸກຄົນໃດໜຶ່ງ ນຳເອົາອາວຸດ, ສິ່ງທີ່ສາມາດໃຊ້ເປັນອາວຸດ, ສິ່ງເສບຕິດທຸກປະເພດ, ເຄື່ອງເບື່ອເມົາ, ທາດລະເບີດ, ສານເຄມີ ແລະ ອາຫານເປັນພິດຕ່າງໆ ເຂົ້າໄປໃນສະໂມສອນຫ້ອງບໍລິການຫລິ້ນເກມ, ຫ້ອງກາຊີໂນ ແລະ ຫ້າມນຳໃຊ້ສະຖານທີ່ດັ່ງກ່າວ ໄປໃນທາງທີ່ຜິດກົດໝາຍ.

# ໝວດທີ IV
## ວ່າດ້ວຍ ການກຳນົດເວລາ ແລະ ອະນຸຍາດ

**ມາດຕາ 5 : ການກຳນົດເວລາອະນຸຍາດ:**

5.1 ໃບອະນຸຍາດນຳເຂົ້າເຄື່ອງຫລິ້ນເກມ, ຕູ້ເກມ, ຊິ້ນສ່ວນອາໄຫລ່, ເຄື່ອງປະກອບການຫລິ້ນເກມທຸກປະເພດ ລວມທັງອຸປະກອນຮັບໃຊ້ໃນຫ້ອງກາຊີໂນ ມີກຳນົດໃຊ້ໄດ້ບໍ່ເກີນ 15 ວັນ ຕາມຈຳນວນເກມທີ່ອະນຸຍາດ;

5.2 ໃບອະນຸຍາດ ເປີດບໍລິການຫລິ້ນເກມທຸກປະເພດ ຂອງບັນດາສະໂມສອນ, ຫ້ອງບໍລິການຫລິ້ນເກມ, ຫ້ອງກາຊີໂນ ຂອງ ຄົນພາຍໃນ ແລະ ຕ່າງປະເທດ ມີກຳນົດ 12 ເດືອນ, ຜູ້ປະກອບກິດຈະການນັ້ນໆ ຕ້ອງໄດ້ຕໍ່ໃບອະນຸຍາດຄືນໃໝ່ ນຳອົງການຈັດຕັ້ງທີ່ກ່ຽວຂ້ອງ ທີ່ໄດ້ ກຳນົດ ໃນ ມາດຕາ 3 ໝວດທີ II ຂອງ ຂໍ້ກຳນົດສະບັບນີ້;

5.3 ການກຳນົດໂມງ, ເວລາເປີດ-ປິດ ບໍລິການການຫລິ້ນເກມປະເພດຕ່າງໆ ມອບໃຫ້ພະແນກ ຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ, ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳປະຈຳເມືອງ ໃນຂອບເຂດທົ່ວປະເທດ ສົມທົບກັບອຳນາດການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນໆ ເປັນຜູ້ຄົ້ນຄວ້າວາງລະບຽບການລະອຽດກ່ຽວກັບໂມງເປີດ ແລະ ໂມງປິດ( ໄຂ-ອັດ ) ການຫລິ້ນເກມຝຶກສະໝອງລອງປັນຍາ ຕາມສະພາບຕົວຈິງຂອງທ້ອງຖິ່ນຕົນ, ຕາມລະດູການ, ຍາມປິດພາກຮຽນ, ວັນພັກປະຈຳອາທິດ, ວັນບຸນຕ່າງໆ, ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ການຮ່ຳຮຽນ, ໂມງ, ເວລາລັດຖະການ ແລະ ການພັກຜ່ອນ ຂອງຜູ້ອື່ນ.

# ໝວດທີ V
## ວ່າດ້ວຍການຍ້ອງຍໍ ແລະ ປະຕິບັດວິໄນ

**ມາດຕາ 6 : ການຍ້ອງຍໍ :**

6.1 ບັນດາສະໂມສອນ - ຫ້ອງບໍລິການຫລິ້ນເກມທຸກປະເພດ, ຫ້ອງກາຊີໂນທີ່ປະຕິບັດຖືກຕ້ອງຕາມຂໍ້ກຳນົດສະບັບນີ້ໄດ້ດີ, ຈະໄດ້ຮັບການສົ່ງເສີມ, ຍ້ອງຍໍ ແລະ ປົກປ້ອງຜົນປະໂຫຍດ ຕາມລະບຽບກົດໝາຍ.

**ມາດຕາ 7 : ການປະຕິບັດວິໄນ :**

**7.1 ບັນດາສະໂມສອນ - ຫ້ອງບໍລິການຫລິ້ນເກມທຸກປະເພດ, ຫ້ອງກາຊີໂນ, ຫົວໜ່ວຍທຸລະກິດໃດລ່ວງລະເມີດຕໍ່ຂໍ້ກຳນົດສະບັບນີ້ ຈະຖືກປະຕິບັດວິໄນ, ຕັກເຕືອນ, ປັບໄໝຕາມຂັ້ນຕອນ ດັ່ງນີ້ :**

- ກະທຳຜິດຄັ້ງທີ່ ໜຶ່ງ : ສຶກສາອົບຮົມ, ຕັກເຕືອນ, ແນະນຳ ໃຫ້ປັບປຸງ, ປ່ວແປງ ແລະ ເຮັດບົດບັນທຶກການກະທຳຜິດ;

- ກະທຳຜິດຄັ້ງທີ່ ສອງ : ສຶກສາອົບຮົມ, ຕັກເຕືອນ, ເຮັດບົດບັນທຶກການກະທຳຜິດ ແລະ ປັບໃໝ 5.000.000 ( ຫ້າລ້ານກີບ );
- ກະທຳຜິດຄັ້ງທີ່ ສາມ : ສຶກສາອົບຮົມ, ຕັກເຕືອນ, ເຮັດບົດບັນທຶກການກະທຳຜິດ ແລະ ປັບໃໝ 10.000.000 ( ສິບລ້ານກີບ );
- ກະທຳຜິດຄັ້ງທີ່ ສີ່ : ຢຶດອຸປະກອນຫລິ້ນເກມ ຖອນໃບອະນຸຍາດສັ່ງປິດກິດຈະການປະກອບສຳນວນຄະດີສົ່ງຟ້ອງສານ ຕາມລະບຽບກົດໝາຍ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

### ມາດຕາ 8 : ສິດໃນການຄຸ້ມຄອງ ແລະ ກວດກາ :

8.1 ຂັ້ນໃດອະນຸຍາດ ແມ່ນຂັ້ນນັ້ນຕ້ອງຮັບຜິດຊອບຄຸ້ມຄອງ, ກວດກາ ແລະ ປັບໃໝ. ຂັ້ນເທິງ ມີສິດກວດກາ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ລະບຽບການຂັ້ນລຸ່ມຂອງຕົນ, ໃນກໍລະນີຂັ້ນລຸ່ມປະລະໜ້າທີ່ ຂັ້ນເທິງ ຈະແຕ່ງຕັ້ງຄະນະສະເພາະກິດລົງກວດກາ ແລະ ແກ້ໄຂ ໂດຍກົງ.

### ມາດຕາ 9 : ການມອບສິດໜ້າທີ່

9.1 ຂັ້ນສູນກາງ : ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ, ມອບໃຫ້ກົມວັດທະນະທຳມະຫາຊົນ; ຂັ້ນທ້ອງຖິ່ນ : ມອບໃຫ້ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ, ເຂດພິເສດ, ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳປະຈຳເມືອງ ໃນຂອບເຂດທົ່ວປະເທດ ເປັນໃຈກາງໃນການປະສານສົມທົບ ກັບ ອຳນາດການປົກຄອງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມຂໍ້ກຳນົດສະບັບນີ້.

### ມາດຕາ10: ຜົນສັກສິດ

10.1 ຂໍ້ກຳນົດສະບັບນີ້ ມີຜົນສັກສິດປະກາດໃຊ້ ເປັນທາງການນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ, ທຸກຂໍ້ກຳນົດກົດລະບຽບ ທີ່ຂັດກັບ ຂໍ້ກຳນົດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

**ພັນດວງຈິດ ວົງສາ**

( ເຊັນ ແລະ ຈ້ຳກາແລ້ວ )